# ຄຳແນະນຳສະບັບປັບປຸງ: ເອກະສານຂອງການ ເຂົ້າຢ້ຽມຢາມ ຜູ້ທີ່ທ່ານຮັກໃນສະຖານທີ່ດູແລໄລຍະຍາວ

[ຈັງຫວະເພັງ]

*[ຂໍ້ຄວາມເທິງໜ້າຈໍ] ຄຳແນະນຳສະບັບປັບປຸງ: ການຢ້ຽມຢາມຄົນທີ່ທ່ານຮັກໃນສະຖານທີ່ດູແລໄລຍະຍາວ*

ສະບາຍດີ [ມາເຣຍ], ຂ້າພະເຈົ້າຊື່ວ່າມາເຣຍ ຢູ່ພະແນກສາທາລະນະສຸກ ລັດມິນນີໂຊຕ້າ (Minnesota Department of Health).

ຂ້າພະເຈົ້າຈະອະທິບາຍໄປພ້ອມກັບທ່ານ ແລະ ຄຳແນະນຳສະບັບປັບປຸງສຳລັບການມາຢ້ຽມຢາມ, ເຖິງວ່າຈະມີການກອດຫຼືສຳພັດຈາກຄົນທີ່ທ່ານຮັກ ເຊິ່ງອາໃສຢູ່ໃນສະຖານທີ່ດູແລໄລຍະຍາວ.

ວັກຊີນໂຄວິດ-19 ເຮັດໃຫ້ມີການຫຼຸດຜ່ອນການຕິດເຊື້ອຢ່າງຊ້າໆ ແລະ ມີຄວາມເປັນໄປໄດ້ທີ່ຈະຂະຫຍາຍເວລາໃຫ້ມີການຢ້ຽມຢາມຢ່າງປອດໄພ ແລະ ເປັນເຫດໃຫ້ຜູ້ຢູ່ອາໄສ, ຄອບຄົວຂອງພວກເຂົາ ແລະ ໝູ່ເພື່ອນ ໄດ້ຮັບການດູແລໄລຍະຍາວຮ່ວມກັນ.

*[ຂໍ້ຄວາມເທິງໜ້າຈໍ] ຮຽນຮູ້ຂໍ້ມູນລ້າສຸດກ່ຽວກັບວິທີການ ແລະ ໄລຍະເວລາທີ່ທ່ານສາມາດຢ້ຽມຢາມຄົນທີ່ທ່ານຮັກ, ໂທຫາບ່ອນຢູ່ຂອງພວກເຂົາ.*

[ມາເຣຍ] ຮຽນຮູ້ຂໍ້ມູນລ້າສຸດກ່ຽວກັບວິທີການ ແລະ ໄລຍະເວລາທີ່ທ່ານສາມາດຢ້ຽມຢາມຄົນທີ່ທ່ານຮັກ, ໂທຫາບ່ອນຢູ່ຂອງພວກເຂົາ.

ຜູ້ຢູ່ອາໄສໄລຍະຍາວ ປັດຈຸບັນນີ້ແມ່ນສາມາດເຕົ້າໂຮມກັບຄົນອື່ນ ແລະ ຜູ້ອາໄສທີ່ໄດ້ຮັບວັກຊີນຄົບສາມາດກອດກັບຜູ້ທີ່ມາຢ້ຽມຢາມເຂົາເຈົ້າໄດ້. ຜູ້ທີ່ອາໄສຢູ່ ແລະ ຄົນທີ່ມາຢ້ຽມຢາມພວກເຂົາຕ້ອງໃສ່ຜ້າອັດປາກ ແລະ ຕ້ອງແນ່ໃຈວ່າໄດ້ລ້າງມືກ່ອນເຂົ້າ ແລະ ຫຼັງຈາກທີ່ມາຢ້ຽມຢາມພວກເຂົາ.

ໃນຂະນະທີ່ການອະນຸຍາດໃຫ້ເຂົ້າຢ້ຽມຢາມຂ້າງໃນ, ການຢ້ຽມຢາມກາງແຈ້ງຍັງມີຄວາມຈຳເປັນຕ້ອງດຳເນີນການຢູ່ຍ້ອນວ່າ ມັນມີຄວາມສ່ຽງໜ້ອຍທີ່ຈະແຜ່ເຊື້ອໂຄວິດ-19.

ສະຖານທີ່ດູແລໄລຍະຍາວທີ່ຈະຮອງຮັບຜູ້ເຂົ້າມາຢ້ຽມຢາມອາດຈະມີການປ່ຽນແປງໄດ້ ຂໍໃຫ້ຜູ້ເຂົ້າຢ້ຽມຢາມໂທຫາລ່ວງໜ້າກ່ອນ ເພື່ອໃຫ້ພວກເຂົາຮູ້ວ່າຈະມີຄົນມາຢ້ຽມຢາມ.

*[ເຄື່ອງໝາຍຢູ່ຢ່າງປອດໄພຂອງມິນນີໂຊຕ້າ ແລະ ລິ້ງທີ່ https://www.health.state.mn.us/diseases/coronavirus/hcp/ltc.html]*

[ຈັງຫວະເພັງ]

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

3/30/21 (Lao)

ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989